ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

*****

ເລກທີ 131 /ທຫລ

ທະນາຄານແຫ່ງ ສ.ປ.ປ. ລາວ

ນະຄອນຫຼວງວຽງຈັນ, ວັນທີ 19 /03/2007

# ຂໍ້ຕົກລົງ

## ວ່າດ້ວຍ ການປະຕິບັດອັດຕານໍ້າມັນ

## ຂອງພະນັກງານທະນາຄານແຫ່ງ ສປປ ລາວ

- ອີງຕາມກົດໝາຍ ວ່າດ້ວຍທະນາຄານແຫ່ງ ສປປ ລາວ ສະບັບເລກທີ 05/ສພຊ ລົງວັນທີ 14 ຕຸລາ 1999 ;
- ເພື່ອເປັນການແກ້ໄຂຄວາມຫຍຸ້ງຍາກຂອງພະນັກງານໃນການເດີນທາງໄປ-ມາ ສໍານັກງານ;
- ອີງຕາມການເຫັນດີເປັນເອກະພາບຂອງກອງປະຊຸມຄະນະພັກທະນາຄານແຫ່ງ ສປປ ລາວ ຄັ້ງວັນທີ 07 ມີນາ 2007.

## ຜູ້ວ່າການທະນາຄານແຫ່ງ ສປປ ລາວ ຕົກລົງ :

<u>ມາດຕາ 1 :</u> ປະຕິບັດອັດຕານໍ້າມັນປະຈໍາເດືອນໃຫ້ພະນັກງານປະຈໍາການຂອງທະນາຄານແຫ່ງ ສປປ ລາວ ຕາມຕໍາແໜ່ງງານ ດັ່ງນີ້ :

| | |
|---|---|
| 1. ເລຂາຄະນະພັກ, ຜູ້ວ່າການທະນາຄານແຫ່ງ ສປປ ລາວ | 320 ລິດ / ເດືອນ |
| 2. ຮອງເລຂາຄະນະພັກກະຊວງ, ຮອງຜູ້ວ່າການ ທະນາຄານແຫ່ງ ສປປ ລາວ | 280 ລິດ / ເດືອນ |
| 3. ຄະນະພັກທະນາຄານແຫ່ງ ສປປ ລາວ | 200 ລິດ / ເດືອນ |
| 4. ຫົວໜ້າກົມ ແລະທຽບເທົ່າ | 160 ລິດ / ເດືອນ |
| 5. ຮອງຫົວໜ້າກົມ ແລະທຽບເທົ່າ | 130 ລິດ / ເດືອນ |
| 6. ຫົວໜ້າພະແນກ ແລະທຽບເທົ່າ | 80 ລິດ / ເດືອນ |
| 7. ຮອງພະແນກ ແລະທຽບເທົ່າ | 60 ລິດ / ເດືອນ |
| 8. ພະນັກງານວິຊາການ ແລະຜູ້ທີ່ໄປຮຽນຍາວນານ ໝົດມື້ຢູ່ພາຍໃນປະເທດໃນໂມງລັດຖະການ | 40 ລິດ / ເດືອນ |
| 9. ພະນັກງານຕາມສັນຍາ | 25 ລິດ / ເດືອນ |

ທະນາຄານແຫ່ງ ສ.ປ.ປ. ລາວ, ຖະໜົນ ຢອນເນ, ນະຄອນຫຼວງວຽງຈັນ ຕູ້ໄປສະນີ 19
ໂທລະພິມ : 4304 BNL. VTE.LS ໂທລະສານ : (856)-21-21 3108 ໂທລະສັບ : 213109-213110 E-mail:Bol@pan-laos.net.la

ສຳລັບຜູ້ທີ່ຄວບຕຳແໜ່ງທັງສາຍພັກ ແລະສາຍລັດ ຫຼື ຮັບຜິດຊອບຫຼາຍວຽກງານ ຕາມການແຕ່ງຕັ້ງ ແມ່ນໃຫ້ປະຕິບັດຕາມຕຳແໜ່ງທີ່ສູງສຸດ.

<u>ມາດຕາ 2 :</u> ຫ້ອງການ, ກົມຈັດຕັ້ງ-ພະນັກງານ, ບັນດາສາຂາ ແລະທຸກພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຕາມໜ້າທີ່ຂອງໃຜລາວ.

<u>ມາດຕາ 3 :</u> ຂໍ້ຕົກລົງສະບັບນີ້ມີຜົນສັກສິດ ນັບແຕ່ ເດືອນ 04 / 2007 ເປັນຕົ້ນໄປ. ທຸກນິຕິກຳທີ່ນຳໃຊ້ ໃນເມື່ອກ່ອນ ຊຶ່ງຂັດກັບຂໍ້ຕົກລົງສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ຜູ້ວ່າການທະນາຄານແຫ່ງ ສປປ ລາວ




ພູເພັດ ຄຳພູນວົງ